## ມິຊຊາອາທິດທີ 6 ກຳນົດທຳມະດາ ປີ C
## ວັນທີ 17 ກຸມພາ 2019



**ພຣະວໍ່ະລະສານໂດຍນັກບຸນລູກາ 6, 17, 20-26**

ໃນເວລານັ້ນ, ເມື່ອພຣະເຢຊູເຈົ້າສະເດັດລົງຈາກພູພ້ອມກັບພວກສາວົກ, ພຣະອົງກໍຊົງຢຸດເຊົາຢູ່ທີ່ງພຽງ. ຢູ່ທີ່ນັ້ນມີໝູ່ລູກສິດແລະປະຊາຊົນມາກມາຍຈາກແຂວງຢູດາ, ຈາກເຢລູຊາແລມ, ຈາກເມືອງຊີໂຣແລະຊີດອນທີ່ຢູ່ແຄມທະເລ. ພຣະອົງຊົງເງີຍໜ້າຂຶ້ນເບິ່ງພວກລູກສິດແລະກ່າວວ່າ:

ບຸນມະຫາລາບແກ່ພວກທ່ານຜູ້ທຸກຈົນ, ຍ້ອນວ່າອານາຈັກຂອງພຣະເຈົ້າເປັນຂອງພວກທ່ານ.

ບຸນມະຫາລາບແກ່ພວກທ່ານທີ່ກຳລັງຫອດຫິວ, ຍ້ອນວ່າພວກທ່ານຈະໄດ້ອີ່ມໜຳສຳລານ.

ບຸນມະຫາລາບແກ່ພວກທ່ານທີ່ກຳລັງຮ້ອງໄຫ້, ຍ້ອນວ່າພວກທ່ານຈະໄດ້ຍິ້ມຫົວ.

ບຸນມະຫາລາບແກ່ພວກທ່ານເມື່ອຖືກເຂົາກຽດຊັງ, ຂັບໄລ່, ສົບປະໝາດແລະຂັດຊື່ຂອງພວກທ່ານຖິ້ມເໝືອນດັ່ງອັນຊົ່ວຊ້າຍ້ອນບຸດມະນຸດ. ໃນວັນນັ້ນ, ພວກທ່ານຈົ່ງຊື່ນຊົມໂດດເຕັ້ນຍິນດີ, ຍ້ອນວ່າບຳເນັດລາງວັນຂອງພວກທ່ານຍິ່ງໃຫຍ່ໃນສະຫວັນ. ບັນພະບຸລຸດຂອງພວກນັ້ນກໍເຄີຍທຳຕໍ່ບັນດາປະພາສົກແບບນີ້ແລ.

ເວນກັມແກ່ພວກເຈົ້າເຫລົ່າເສດຖີ, ຍ້ອນວ່າພວກເຈົ້າໄດ້ຮັບທຸເລົາບັນເທົາໃຈແລ້ວ.

ເວນກັມແກ່ພວກເຈົ້າຜູ້ອີ່ມໜຳສຳລານຢູ່ດຽວນີ້, ຍ້ອນວ່າພວກເຈົ້າຈະຫອດຫິວ.

ເວັນກັມແກ່ພວກເຈົ້າຜູ້ຍິ້ມຫົວຢູ່ດຽວນີ້, ຍ້ອນວ່າພວກເຈົ້າຈະໄວ້ທຸກແລະຮ້ອງໄຫ້ກິນນ້ຳຕາ.

ເວັນກັມແກ່ພວກເຈົ້າເມື່ອມີຄົນທັງຫລາຍຊົມເຊີຍສັນລະເສີນ! ບັນພະບຸລຸດຂອງພວກເຂົາກໍເຄີຍທຳຕໍ່ບັນດາປະພາສົກທຽມແບບນີ້ແລ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 6, 17, 20-26**

ເມື່ອຟັງວາຈາຂອງພຣະເຈົ້າໃນວັນນີ້ໂດຍນັກບຸນລູກາທີ່ກ່າວເຖິງບຸນມະຫາລາບ, ສິ່ງທໍາອິດທີ່ພວກເຮົາສັງເກດໄດ້ຄື ບຸນມະຫາລາບທີ່ນັກບຸນລູກາກ່າວໃນວັນນີ້ມີເນື້ອຫາສັ້ນກວ່າບຸນມະຫາລາບຊຶ່ງພວກເຮົາຮູ້ຈັກແລະເລົ່າຂຶ້ນໃຈນັ້ນຄືບຸນມະຫາລາບແປດປະການໃນພຣະວໍລະສານໂດຍນັກບຸນມັດເທວ. ສິ່ງທີສອງທີ່ພວກເຮົາສາມາດຈໍາແນກໄດ້ຄືສະຖານທີ່ແລະຜູ້ຊຶ່ງພຣະເຢຊູເຈົ້າເທດສອນກ່ຽວກັບບຸນມະຫາລາບນີ້: ໃນພຣະວໍລະສານໂດຍນັກບຸນມັດເທວ, ພຣະເຢຊູເຈົ້າເທດສອນບຸນມະຫາລາບຢູ່ບົນພູເຂົາ ຊຶ່ງພວກເຮົາເຄີຍຮຽກກັນວ່າ: ບົດເທດບົນພູເຂົາ. ແລະຜູ້ທີ່ມາຟັງພຣະເຢຊູເຈົ້າ ມີຝູງຊົນແລະພວກລູກສິດ. ຄໍາເທດສອນຂອງພຣະເຢຊູເຈົ້າໃນທີ່ນີ້ແມ່ນສໍາລັບຝູງຊົນແລະພວກລູກສິດ. ສ່ວນໃນພຣະວໍລະສານໂດຍນັກບຸນລູກາ, ພຣະເຢຊູເຈົ້າບໍ່ໄດ້ເທດສອນບຸນມະຫາລາບຢູ່ບົນພູເຂົາ, ແຕ່ຢູ່ທົ່ງພຽງ. ແລະຢູ່ທີ່ນັ້ນກໍມີຝູງຊົນທີ່ມາຈາກສະຖານທີ່ແຕກຕ່າງກັນແລະມີພວກລູກສິດ. ແຕ່ອີກສິ່ງໜຶ່ງທີ່ແຕກຕ່າງໄປຈາກພຣະວໍລະສານໂດຍນັກບຸນມັດເທວຄື « ພຣະເຢຊູເຈົ້າຊົງເງີຍໜ້າຂຶ້ນເບິ່ງພວກລູກສິດແລະກ່າວຄໍາເທດສອນ ». ໝາຍວ່າກຸ່ມຄົນທີ່ພຣະເຢຊູເຈົ້າຢາກເນັ້ນເຖິງບຸນມະຫາລາບນີ້ແມ່ນພວກລູກສິດຂອງພຣະອົງນັ້ນເອງ. ແລະສິ່ງສຸດທ້າຍເມື່ອພວກເຮົາອ່ານວາຈາຂອງພຣະເຈົ້າໃນວັນນີ້ກໍເກີດມີຄໍາຖາມຂຶ້ນມາວ່າ: ເປັນຫຍັງພຣະເຢຊູເຈົ້າຈຶ່ງຍົກຍ້ອງຄົນທຸກຈົນແລະສາບແຊ່ງຄົນຮັ່ງມີ? ຄວາມຮັ່ງມີເປັນສິ່ງບໍ່ດີຕໍ່ໜ້າພຣະເຢຊູເຈົ້າບໍ? ຫລືພຣະອົງຢາກບອກເຕືອນພວກເຮົາຫຍັງກ່ຽວກັບຄວາມຜູກພັນກັບວັດຖຸເງິນຄໍາ? ຄົນທຸກຈົນທີ່ພຣະເຢຊູເຈົ້າກ່າວໃນທີ່ນີ້ແມ່ນໃຜ?

ພວກເຮົາຈະເຂົ້າໃຈຄໍາສອນຂອງພຣະເຢຊູເຈົ້າໃນວັນນີ້ ກໍຕໍ່ເມື່ອພວກເຮົາເຂົ້າໃຈສະພາບຊີວິດຂອງພວກລູກສິດໃນການຕິດຕາມພຣະເຢຊູເຈົ້າ. ພວກລູກສິດເມື່ອຖືກຮຽກເອີ້ນໃຫ້ຕິດຕາມພຣະເຢຊູເຈົ້າໄປ ພວກເຂົາກໍໄດ້ປະຖິ້ມທຸກຢ່າງບໍ່ວ່າຈະເປັນໄຮ່ນາຕາກ້າ, ເຮືອນຊານ, ພໍ່ແມ່, ຍາດຕິພີ່ນ້ອງຜູ້ໃກ້ຊິດແລະຮັກແພງ. ສໍາລັບພວກລູກສິດ ,ຜູ້ຊຶ່ງເປັນທີ່ເພິ່ງແລະຄວາມຫວັງຂອງພວກເຂົາໃນຊີວິດຄືພຣະອາຈານເຢຊູ. ດັ່ງນັ້ນ, ຊີວິດແລະການເປັນຢູ່ຂອງພວກເຂົາຂຶ້ນກັບພຣະເຢຊູເຈົ້າ. ຫລືເວົ້າອີກຢ່າງໜຶ່ງຄື ຄວາມຮັ່ງມີຂອງພວກເຂົາແມ່ນຢູ່ໃນພຣະເຢຊູກຣິສໂຕເຈົ້ານັ້ນເອງ.

ສ່ວນຜູ້ທີ່ມີສັບສົມບັດເງິນທອງຫລາຍ, ແນ່ນອນຄວາມຫວັງ, ທີ່ເພິ່ງແລະຊີວິດຂອງເຂົາກໍຍ່ອມຕິດສະໜິດແລະຜູກພັນນໍາສິ່ງທີ່ເຂົາມີ. ແທນທີ່ເຂົາຈະໄວ້ວາງໃຈໃນພຣະເຈົ້າ ກັບໄວ້ວາງໃຈນໍາວັດຖຸສິ່ງຂອງທີ່ເປັນຂອງໆໂລກ. ແທນທີ່ເຂົາຈະຊອກສະແຫວງຫາອານາຈັກສະຫວັນ ກັບຊອກຫາຄວາມສຸກແລະຄວາມມ່ວນຊື່ນຢູ່ໃນໂລກນີ້. ເພາະສະນັ້ນ, ພຣະເຢຊູເຈົ້າຈຶ່ງກ່າວວ່າ: « ເວນກັມແກ່ພວກເຈົ້າຜູ້ເສດຖີ. ຍ້ອນວ່າພວກເຈົ້າໄດ້ຮັບຄວາມທຸເລົາເບົາໃຈແລ້ວ ». ສ່ວນຜູ້ທີ່ສະຫລະທຸກຢ່າງເພື່ອຕິດຕາມພຣະເຢຊູເຈົ້າໄປ, ເຂົາເປັນຜູ້ມີບຸນມະຫາສານ ຍ້ອນວ່າອານາຈັກຂອງພຣະເຈົ້າເປັນຂອງໆເຂົາ.

ວັນນີ້, ພຣະເຢຊູເຈົ້າສືບຕໍ່ກ່າວກັບພວກເຮົາແຕ່ລະຄົນທີ່ມາຟັງພຣະອົງ ບໍ່ວ່າຈະເປັນຜູ້ຮັ່ງມີຫລືທຸກຈົນ, ບໍ່ວ່າຈະເປັນນັກບວດຫລືຄາລະວາດ; ຖ້າພວກເຮົາຮູ້ຈັກສະແຫວງຫາຄວາມຮັ່ງມີທີ່ແທ້ຈິງ, ຄວາມຮັ່ງມີທີ່ບໍ່ມີວັນສູນເສຍເປັນ ອັນແມ່ນພຣະເຢຊູກຣິສໂຕເຈົ້າແລ້ວ. ແນ່ນອນ, ພວກເຮົາທຸກຄົນລ້ວນແຕ່ເປັນຜູ້ມີບຸນມະຫາສານ ຍ້ອນພວກເຮົາໄດ້ພົບກັບຂຸມສັບໃນເມືອງສະຫວັນຕັ້ງແຕ່ຢູ່ໃນໂລກນີ້ແລ້ວ ອັນແມ່ນພຣະເຢຊູກຣິສໂຕເຈົ້າຜູ້ຊຶ່ງຮັກພວກເຮົາແລະສະຫລະຊີວິດຂອງພຣະອົງເອງເພື່ອໃຫ້ພວກເຮົາມີຊີວິດແລະແມ່ນຊີວິດທີ່ໝັ້ນຄົງຖາວອນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ